**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0196-.../ກປ

ນະຄອນຫຼວງວຽງຈັນ, ວັນທີ 27 JAN 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງເຫັນດີ ຂອງກອງປະຊຸມຄະນະນຳກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ທັນວາ 2021.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແນໃສ່ຄຸ້ມຄອງທີ່ດິນກະສິກຳ ໃຫ້ມີປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຂຽນເປັນຕົວອັກສອນຫຍໍ້ວ່າ **"ຄພດກ"** ແມ່ນໂຄງປະກອບກົງຈັກ ຂອງກະຊວງກະສິກຳ ແລະ ປ່າໄມ້, ມີພາລະບົດບາດເປັນເສນາທິການໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນການຄຸ້ມຄອງ, ພັດທະນາ, ສຳຫຼວດ, ວາງແຜນ ກຳນົດແບ່ງເຂດ, ປົກປັກຮັກສາທີ່ດິນກະສິກຳ; ວິໄຈດິນ, ຝຸ່ນ, ພືດ ແລະ ນໍ້າ ສຳລັບການຜະລິດກະສິກຳ, ສາທິດ, ຖ່າຍທອດເຕັກໂນໂລຊີ ຂໍ້ມູນຂ່າວສານການນຳໃຊ້ດິນ ແລະ ຝຸ່ນ ເພື່ອຮັບປະກັນ ການນຳໃຊ້ທີ່ດິນ ຢ່າງມີປະສິດທິຜົນ, ຍືນຍົງ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີໜ້າທີ່ດັ່ງນີ້:

1. ປະຕິບັດກົດໝາຍ, ດຳລັດ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງກະສິກຳ ແລະ ປ່າໄມ້;
2. ຄົ້ນຄວ້າ, ເຊື່ອມຊຶມ ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ມາເປັນແຜນງານ ແລະ ໂຄງການສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ຄົ້ນຄວ້ານຳສະເໜີ, ສ້າງ, ປັບປຸງ ນິຕິກຳ, ລະບຽບການນຳໃຊ້, ການຄຸ້ມຄອງ ແລະ ສະຫງວນໄວ້ທີ່ດິນກະສິກຳບໍ່ໃຫ້ຫັນປ່ຽນ ໄປເປັນທີ່ດິນປະເພດອື່ນ ພ້ອມທັງຈັດຕັ້ງການໂຄສະນາ, ເຜີຍແຜ່ນິຕິກຳ ອອກສູ່ສັງຄົມຢ່າງທົ່ວເຖິງ;
3. ສຸມທຸກກຳລັງແຮງ ເພື່ອຊຸກຍູ້ ສົ່ງເສີມການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄ້ຳປະກັນ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ, ມີວັດຖຸດິບປ້ອນໂຮງງານປຸງແຕ່ງ, ມີຜົນຜະລິດກະສິກຳສົດ, ສະອາດ ແລະ ປອດໄພ ເພື່ອຊົມໃຊ້ພາຍໃນທົດແທນການນຳເຂົ້າ;
4. ຍູ້ແຮງການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າແບບຫຼາກຫຼາຍ ໂດຍມີການກຳນົດ ເຂດການຜະລິດຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ ຂອງທ້ອງຖິ່ນ ແລະ ເຂດແຄວ້ນ, ຊຸກຍູ້ການພັດທະນາວິສາຫະກິດ, ຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າກະສິກຳ, ສະອາດ, ທີ່ເປັນທ່າແຮງໄດ້ປຽບ ເພື່ອສົ່ງອອກຕ່າງປະເທດ ໂດຍສອດຄ່ອງກັບມາດຕະຖານ ສຸຂານາໄມ ພືດ ແລະ ສັດ ຂອງປະເທດຄູ່ຄ້າ;
5. ເລັ່ງຈັດບຸລິມະສິດ ສຳຫຼວດ, ສຶກສາຈຳແນກ, ປະເມີນຄຸນນະພາບ ແລະ ຄວາມເໝາະສົມຂອງດິນກະສິກຳ ຕໍ່ການປູກພືດຊະນິດຕ່າງໆ ເພື່ອກຳນົດແບ່ງເຂດການຜະລິດ (ເຂດປູກ, ເຂດລ້ຽງ) ເປັນຕົ້ນເຂດປູກພືດອຸດສາຫະກຳ, ເຂດປູກພືດສະບຽງ, ເຂດປູກເຂົ້າ, ເຂດປູກໄມ້ໃຫ້ໝາກ, ເຂດປູກໄມ້ເສດຖະກິດ, ເຂດປູກພືດອາຫານສັດ, ເຂດລ້ຽງສັດໃຫຍ່ ຕາມແລວທາງລົດໄຟລາວ-ຈີນ ແລະ ແລວທາງເສດຖະກິດ ເພື່ອຮັບໃຊ້ການລົງທຶນ ແລະ ວາງແຜນຊຸກຍູ້ ສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ;
6. ກຳນົດແບ່ງເຂດທີ່ດິນກະສິກຳ ໃນເນື້ອທີ່ 4,5 ລ້ານເຮັກຕາ, ວາງແຜນນຳໃຊ້ທີ່ດິນກະສິກຳ ພ້ອມທັງສ້າງແຜນທີ່ຂ່າວສານດິນກະສິກຳ ແລະ ປັກຫຼັກໝາຍເຂດດິນ ທີ່ຕ້ອງສະຫງວນໄວ້ ເພື່ອການຜະລິດກະສິກຳ, ສ້າງຖານຂໍ້ມູນ ແລະ ອອກໃບຢັ້ງຢືນການນຳໃຊ້ດິນກະສິກຳ;
7. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອິງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ; ສ້າງແຜນການດຸນດ່ຽງຝຸ່ນ ໃນຂອບເຂດທົ່ວປະເທດ;
8. ຄົ້ນຄວ້າ, ທົດລອງ ແລະ ສາທິດຮູບແບບການນຳໃຊ້ທີ່ດິນກະສິກຳ, ການນຳໃຊ້ຝຸ່ນຕ່າງໆ ໃຫ້ຖືກຕ້ອງກັບສະພາບຂອງດິນ ຢູ່ໃນແຕ່ລະເຂດການຜະລິດ, ກວດກາ ຕິດຕາມການນຳໃຊ້ຝຸ່ນ;
9. ບໍລິການວິໄຈດິນ, ຝຸ່ນ, ພືດ ແລະ ນ້ຳ ເພື່ອການຄົ້ນຄວ້າ ການຜະລິດກະສິກຳ ໃຫ້ພາກສ່ວນຕ່າງໆ ທັງພາກລັດ, ຜູ້ປະກອບການ ແລະ ຊາວກະສິກອນ;
10. ຕິດຕາມ, ກວດກາ ການນຳໃຊ້, ການເຊົ່າ, ສຳປະທານ ແລະ ການຫັນປ່ຽນທີ່ດິນກະສິກຳໄປສູ່ເປົ້າໝາຍອື່ນ; ຄົ້ນຄວ້າປະກອບຄຳເຫັນ ທາງດ້ານວິຊາການ ເພື່ອສະເໜີຕໍ່ຂັ້ນເທິງ;
11. ຄຸ້ມຄອງ, ຕິດຕາມ, ກວດກາ, ການບໍລິການ, ການຜະລິດຝຸ່ນ ແລະ ດິນປູກ ຂອງໂຮງງານ, ຜູ້ປະກອບການ ແລະ ກຸ່ມຊາວກະສິກອນ;

12. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການ ຂັ້ນແຂວງ, ເມືອງ ກ່ຽວກັບວຽກງານສຳຫຼວດ, ວາງແຜນນຳໃຊ້ທີ່ດິນກະສິກຳ, ວິໄຈ, ນິຕິກຳ, ການຜະລິດ, ນຳໃຊ້ຝຸ່ນ, ປັບປຸງດິນ ແລະ ການແກ້ໄຂບັນຫາຂອງດິນຕໍ່ການປູກພືດ;
13. ການສ້າງນິຕິກຳຄຸ້ມຄອງທີ່ດິນ, ການພັດທະນາຮູບແບບການນຳໃຊ້ດິນ, ນ້ຳ ແລະ ຝຸ່ນ ເພື່ອການຍົກສະມັດຖະພາບການຜະລິດ ແລະ ສ້າງອາສາສະໝັກໝໍດິນຂັ້ນບ້ານ;
14. ສ້າງແຜນດຳເນີນງານ, ແຜນການ ແລະ ແຜນງົບປະມານ ປະຈຳປີ ພ້ອມທັງຄຸ້ມຄອງ, ຕິດຕາມ, ກວດກາ ສະຫຼຸບ-ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ, ບັນດາໂຄງການ ແລະ ກິດຈະກຳຕ່າງໆ ລວມທັງການໃຊ້ຈ່າຍງົບປະມານທີ່ກົມຮັບຜິດຊອບ ຢ່າງເປັນລະບົບຕໍ່ເນື່ອງ;
15. ພົວພັນ, ຮ່ວມມື ກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ທຶນຮອນ ເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ແຜນການ ແລະ ໂຄງການໃນຂົງເຂດວຽກງານຂອງຕົນ;
16. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃຫ້ໄປຕາມວຽກຈຸດສຸມຂອງກະຊວງ ວຽກຈຸດສຸມຂອງລັດຖະບານໃນແຕ່ລະໄລຍະ ທັງຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ; ມີການຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ໄດ້ຜົນສຳເລັດເປັນຢ່າງດີ;
17. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ຄຸ້ມຄອງພະນັກງານ-ລັດຖະກອນ ແລະ ສ້າງແຜນການບຳລຸງກໍ່ສ້າງພະນັກງານ-ລັດຖະກອນຂອງຕົນ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້; ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງກົມໃຫ້ມີປະສິດທິພາບ;
18. ປະກອບສ່ວນດ້ານວິຊາການ ເຂົ້າໃນການພັດທະນາບັນດາວິທະຍາໄລ ແລະ ໂຮງຮຽນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ພ້ອມທັງສະໜອງດ້ານເຕັກນິກ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ບັນດາສູນ, ສະຖານີ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອປະກອບສ່ວນສ້າງສູນ, ສະຖານີ ດັ່ງກ່າວໃຫ້ມີຄວາມເຂັ້ມແຂງ;
19. ສະຫຼຸບ, ລາຍງານ ວຽກງານຂອງຕົນ ໃຫ້ລັດຖະມົນຕີເພື່ອຊາບ ແລະ ຊີ້ນຳ;
20. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ.

### ມາດຕາ 4 ຂອບເຂດສິດ

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີສິດດັ່ງນີ້:

1. ນຳສະເໜີຮ່າງຍຸດທະສາດ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ດຳລັດວ່າດ້ວຍທີ່ດິນກະສິກຳ ແລະ ນິຕິກຳອື່ນໆ, ແຜນການ, ໂຄງການຈັດຕັ້ງປະຕິບັດ ວາລະແຫ່ງຊາດຂອງກົມ ແລະ ຂະແໜງການ; ຄົ້ນຄວ້າກຳນົດ ນະໂຍບາຍ, ມາດຕະການ ໃນການປົກປັກຮັກສາທີ່ດິນກະສິກຳ, ນຳໃຊ້ທີ່ດິນເພື່ອສົ່ງເສີມການຜະລິດພາຍໃນ ແລະ ສົ່ງອອກ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາອະນຸມັດ;
2. ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ລະບຽບການ ແລະ ໜັງສືສະເໜີຕ່າງໆ ເຖິງຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງ ແລະ ຂະແໜງສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງທີ່ດິນກະສິກຳ ຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ພ້ອມທັງກວດກາຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

3. ຊີ້ນຳ, ຄຸ້ມຄອງ ດ້ານເຕັກນິກ, ວິຊາການ ຕາມການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ຕາມສາຍຕັ້ງ ໃນການຕິກລິງບັນຫາຢ່າງລະອຽດ, ຈະແຈ້ງ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;
4. ຄົ້ນຄວ້າ ແລະ ນຳສະເໜີລັດຖະມົນຕີ ຮັບເອົາການລົງທຶນ, ການອອກ, ໂຈະ ຫຼື ຖອນໃບອະນຸຍາດດຳ ເນີນທຸລະກິດ ກ່ຽວກັບໂຮງງານຜະລິດ ແລະ ຮ້ານຈຳໜ່າຍຝຸ່ນ; ຄົ້ນຄວ້າ ແລະ ປະກອບຄຳເຫັນ ກ່ຽວກັບ ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຕາມພາ ລະບົດບາດຂອງຕົນ ບົນພື້ນຖານກົດໝາຍ ແລະ ລະບຽບການ;
5. ອອກໃບຢັ້ງຢືນການວິໄຈຄຸນນະພາບຂອງດິນ, ຝຸ່ນ, ພືດ ແລະ ນ້ຳ ເພື່ອການຜະລິດກະສິກຳ ໃຫ້ພາກ ສ່ວນຕ່າງໆ ທັງພາກລັດ, ຜູ້ປະກອບການ ແລະ ຊາວກະສິກອນ;
6. ສະເໜີປັບປຸງກົງຈັກການຈັດຕັ້ງ ຕໍ່ກະຊວງກະສິກຳ ແລະ ປ່າໄມ້, ກຳນົດຕຳແໜ່ງງານ, ບັນຈຸ-ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ, ກົດໝາຍ, ລະບຽບການກຳນົດໄວ້;
7. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງ ປະຊຸມ, ສ່ອງແສງລາຍງານ, ຝຶກອົບຮົມ, ສຳມະນາ, ງານວາງສະແດງຕ່າງໆ, ຕະຫຼາດນັດ, ປະກອບສ່ວນ ແລະ ລົງເຮັດວຽກຢູ່ທ້ອງຖິ່ນ-ຮາກຖານ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ;
8. ສະເໜີຕໍ່ ລັດຖະມົນຕີ ໃນການແຕ່ງຕັ້ງ, ສັບຊ້ອນຈັດວາງ, ຍົກຍ້າຍໜ້າທີ່, ເລື່ອນຊັ້ນ-ຂັ້ນເງິນເດືອນ ແລະ ສະເໜີນະໂຍບາຍຕ່າງໆ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ປະຕິບັດວິໄນຕໍ່ພະນັກງານຂອງຕົນ ຕາມລະບຽບການ;
9. ຄຸ້ມຄອງ, ນຳໃຊ້ພະນັກງານ, ງົບປະມານ, ຊັບສິນຂອງລັດ, ຈັດຕັ້ງປະຕິບັດພາລະບົດບາດ ແລະ ໜ້າທີ່ ຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;
10. ພົວພັນ, ຮ່ວມມື, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ກັບອົງການ ຫຼື ສະຖາບັນການຈັດຕັ້ງທີ່ ກ່ຽວຂ້ອງ ຢູ່ພາຍໃນ ແລະ ຕ່າງປະເທດ ບົນພື້ນຖານການຕົກລົງຮ່ວມກັນຕາມການມອບໝາຍ ຂອງ ລັດຖະມົນຕີ, ຮອງລັດຖະມົນຕີ ຜູ້ຊີ້ນຳ;
11. ຈັດຕັ້ງ ແລະ ເຂົ້າຮ່ວມ ກອງປະຊຸມ, ສຳມະນາ, ທັດສະນະສຶກສາ, ຝຶກອົບຮົມ ແລະ ນຳໃຊ້ສື່ໂຄສະນາ ຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ ເພື່ອເຜີຍແຜ່ຜົນສຳເລັດວຽກງານ ຂອງຕົນ ຢ່າງກວ້າງຂວາງ;
12. ໃຫ້ການບໍລິການ ດ້ານວິຊາການ ແລະ ເປັນທີ່ປຶກສາ ເພື່ອຊຸກຍູ້ວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ກະສິກຳ ຕາມຫຼັກວິຊາການ ແລະ ລະບຽບກົດໝາຍທີ່ກຳນົດໄວ້;
13. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍຂອງລັດຖະມົນຕີ, ຮອງລັດຖະ ມົນຕີ ຜູ້ຊີ້ນຳ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບການຈັດຕັ້ງ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີໂຄງປະກອບກົງຈັກດັ່ງລຸ່ມນີ້:

1. ພະແນກບໍລິຫານ ແລະ ແຜນການ;
2. ພະແນກຄຸ້ມຄອງທີ່ດິນກະສິກຳ;
3. ສູນສຳຫຼວດ ແລະ ວາງແຜນນຳໃຊ້ ທີ່ດິນກະສິກຳ;
4. ສູນພັດທະນາທີ່ດິນ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ;
5. ສູນວິໄຈດິນ, ພືດ ແລະ ຝຸ່ນ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີໂຄງປະກອບບຸກຄະລາກອນດັ່ງລຸ່ມນີ້:

1. ຫົວໜ້າກົມ ຈຳນວນ 01 ທ່ານ, ຮັບຜິດຊອບຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການປະຕິບັດວຽກງານ ຂອງຕົນ.

   ໃນເວລາຫົວໜ້າກົມ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມ ທ່ານໃດໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກົມຈຳນວນໜຶ່ງ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກົມ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກົມ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າສູນ, ຮອງຫົວໜ້າສູນ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ ແລະ ສູນ

**ມາດຕາ 7 ໜ້າທີ່ ຂອງພະແນກບໍລິຫານ ແລະ ແຜນການ**

ພະແນກບໍລິຫານ ແລະ ແຜນການ ມີໜ້າທີ່ດັ່ງນີ້:

1. ເປັນເສນາທິການໃຫ້ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໃນການຄຸ້ມຄອງ ແລະ ພັດທະນາວຽກງານຈັດຕັ້ງ, ບໍລິຫານ, ການຄຸ້ມຄອງບຸກຄະລາກອນ, ການຜັນຂະຫຍາຍແຜນຍຸດທະສາດ ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຂອງກະຊວງແຕ່ລະໄລຍະ ມາເປັນແຜນດຳເນີນງານ, ແຜນການ ແລະ ໂຄງການສະເພາະຂອງກົມ ໃຫ້ແທດເໝາະ, ສອດຄ່ອງ, ສາມາດຈັດຕັ້ງປະຕິບັດຢ່າງເປັນຮູບປະທຳ ແລະ ມີປະສິດທິຜົນ;
2. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ນຳສະເໜີ ຮ່າງຂໍ້ກຳນົດ, ກົດລະບຽບ, ກົງຈັກການຈັດຕັ້ງ, ພາລະບົດບາດ, ການກຳນົດຕຳແໜ່ງງານ, ການວາງແຜນພັດທະນາບຸກຄະລາກອນ, ແຜນວຽກ ແລະ ງົບປະມານ ພາຍໃນ, ຕ່າງປະເທດ ຕາມແຜນຍຸດທະສາດຂອງການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແຕ່ລະໄລຍະ;
3. ຄົ້ນຄວ້າ, ສັງລວມ ແລະ ກວດກາ ແຜນດຳເນີນງານ, ແຜນການ ແລະ ແຜນງົບປະມານ ຈາກບັນດາພະແນກ, ສູນ ແລະ ໂຄງການຕ່າງໆ ທີ່ຂຶ້ນກັບກົມ ລວມທັງແຜນການຂອງຂະແໜງການ ແລະ ໜ່ວຍງານສາຍຕັ້ງຢູ່ຂັ້ນທ້ອງຖິ່ນ ແລ້ວສ້າງໃຫ້ເປັນແຜນລວມໃນລະດັບກົມ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
4. ຄຸ້ມຄອງ ບັນຊີການເງິນ, ຄັງເງິນສົດ ແລະ ຊັບສິນຂອງລັດ. ຕິດຕາມ, ຊຸກຍູ້, ກວດກາ, ສະຫຼຸບລາຍຮັບ-ລາຍຈ່າຍ ແລະ ຂຶ້ນແຜນການນຳໃຊ້ງົບປະມານພາຍໃນ ແລະ ຕ່າງປະເທດ;
5. ຄຸ້ມຄອງ, ຕິດຕາມ, ຊຸກຍູ້, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດໂຄງການລົງທຶນ ພາຍໃນ ແລະ ຕ່າງປະເທດ ລວມທັງຊ່ຽວຊານທີ່ປະຕິບັດໜ້າທີ່ພາຍໃນກົມ. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງກົມ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 1 ປີ ແລະ 5 ປີ;

6. ຄຸ້ມຄອງ ເອກະສານຂາເຂົ້າ-ຂາອອກ, ວຽກງານເລຂານຸການ, ພິທີການ ແລະ ປ້ອງກັນຄວາມສະຫງົບພາຍໃນກົມ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອເອື້ອອຳນວຍການຈັດຕັ້ງປະຕິບັດໂຄງການຕ່າງໆ ໃຫ້ທ່ວງທັນເວລາ ແລະ ຍາດແຍ່ງການສະໜັບສະໜູນທຶນຮອນ ແລະ ເຕັກນິກວິຊາການເຂົ້າໃສ່ວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ;
8. ເປັນໃຈກາງ ປະຕິບັດວຽກງານສົ່ງເສີມບົດບາດຍິງ-ຊາຍ, ພັດທະນາຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກ ພາຍໃນກົມ;
9. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງພະແນກຄຸ້ມຄອງທີ່ດິນກະສິກຳ**

ພະແນກຄຸ້ມຄອງທີ່ດິນກະສິກຳ ມີໜ້າທີ່ດັ່ງນີ້:

1. ຕິດຕາມ ແລະ ເກັບກຳຂໍ້ມູນ ການນຳໃຊ້ທີ່ດິນກະສິກຳປະເພດຕ່າງໆ ໃນຂອບເຂດທົ່ວປະເທດ ໂດຍການສ້າງຖານຂໍ້ມູນ, ສະຖິຕິ ແລະ ອອກໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ ລວມທັງການພັດທະນາທີ່ດິນກະສິກຳ ເພື່ອສະເໜີອອກໃບຕາດິນ ນຳພາກສ່ວນທີ່ກ່ຽວຂ້ອງ;
2. ດຳເນີນການຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້, ການເຊົ່າ, ສຳປະທານ ແລະ ການຫັນປ່ຽນການນຳໃຊ້ທີ່ດິນກະສິກຳຢ່າງເປັນລະບົບຕໍ່ເນື່ອງ ແນໃສ່ຄຸ້ມຄອງທີ່ດິນກະສິກຳແບບຍືນຍົງ;
3. ຝຶກອົບຮົມທາງດ້ານວິຊາການດ້ານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເພື່ອສ້າງຄວາມເຂັ້ມແຂງໃຫ້ພະນັກງານຂັ້ນແຂວງ, ຂັ້ນເມືອງ;
4. ຄົ້ນຄວ້າ, ນຳສະເໜີ, ສ້າງນິຕິກຳ ແລະ ລະບຽບການຕ່າງໆ ກ່ຽວກັບການນຳໃຊ້, ການປົກປັກຮັກສາ ທີ່ດິນກະສິກຳ ບໍ່ໃຫ້ຫັນປ່ຽນເປັນດິນປະເພດອື່ນ ພ້ອມທັງໂຄສະນາ, ເຜີຍແຜ່ ຢ່າງທົ່ວເຖິງ;
5. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງສູນສຳຫຼວດ ແລະ ວາງແຜນນຳໃຊ້ ທີ່ດິນກະສິກຳ**

ສູນສຳຫຼວດ ແລະ ວາງແຜນນຳໃຊ້ ທີ່ດິນກະສິກຳ ມີໜ້າທີ່ດັ່ງນີ້:

1. ດຳເນີນ ການສຳຫຼວດ, ສຶກສາຈຳແນກ, ປະເມີນຄຸນນະພາບ ແລະ ຄວາມເໝາະສົມຂອງດິນ, ກຳນົດແບ່ງເຂດທີ່ດິນກະສິກຳ ໃນເນື້ອທີ່ 4,5 ລ້ານເຮັກຕາ, ວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ສ້າງແຜນທີ່ດິນກະສິກຳ ໃນແຕ່ລະລະດັບ ພ້ອມທັງສຳຫຼວດຂອບເຂດ ເພື່ອປັກຫຼັກໝາຍເຂດສະຫງວນທີ່ດິນກະສິກຳໄວ້;
2. ກຳນົດເຂດປູກພືດອຸດສາຫະກຳ, ເຂດປູກພືດສະບຽງ, ເຂດປູກເຂົ້າ, ເຂດປູກໄມ້ໃຫ້ໝາກ, ເຂດປູກໄມ້ເສດຖະກິດ, ເຂດປູກພືດອາຫານສັດ, ເຂດລ້ຽງສັດໃຫຍ່ ຕາມແລວທາງລົດໄຟລາວ-ຈີນ ແລະ ແລວທາງເສດຖະກິດ ເພື່ອຮັບໃຊ້ການລົງທຶນ ແລະ ວາງແຜນຊຸກຍູ້ ສົ່ງເສີມ ການຜະລິດພາຍໃນທົດແທນການນຳເຂົ້າ ແລະ ການຜະລິດເພື່ອສົ່ງອອກ;
3. ຈັດຝຶກອົບຮົມໃຫ້ພະນັກງານວິຊາການ ຂັ້ນແຂວງ, ເມືອງ ຕາມສາຍຕັ້ງຂອງຕົນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ມີປະສິດທິຜົນ;
4. ສຳຫຼວດ, ວັດແທກລະດັບນ້ຳໃຕ້ດິນ ແລະ ເກັບກຳຕົວຢ່າງໃນພື້ນທີ່ດິນກະສິກຳມາວິໄຈ ແລະ ສ້າງເປັນແຜນທີ່ ເພື່ອເປັນຂໍ້ມູນການວາງແຜນນຳໃຊ້ ແລະ ພັດທະນາທີ່ດິນກະສິກຳ;
5. ສະໜອງ ແລະ ໃຫ້ບໍລິການຂໍ້ມູນ ແກ່ພາກລັດ, ອົງການຈັດຕັ້ງສາກົນ, ຜູ້ປະກອບການ ແລະ ຊາວກະສິກອນ ເພື່ອນຳໃຊ້ເຂົ້າໃນການພັດທະນາ ແລະ ປົກປັກຮັກສາທີ່ດິນກະສິກຳ ໃຫ້ມີປະສິດທິຜົນ;
6. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 10 ໜ້າທີ່ ຂອງສູນພັດທະນາທີ່ດິນ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ**

ສູນພັດທະນາທີ່ດິນ ແລະ ຄຸ້ມຄອງການນຳໃຊ້ຝຸ່ນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ທົດລອງ, ສາທິດ ຮູບແບບການນຳໃຊ້ທີ່ດິນກະສິກຳ ໃນເຂດການຜະລິດ ໃຫ້ສອດຄ່ອງ ກັບຈຸດພິເສດ ແລະ ພູມສັນຖານ ຂອງແຕ່ລະທ້ອງຖິ່ນ ໂດຍນຳໃຊ້ເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີທີ່ເໝາະສົມ; ສຶກສາ, ຄົ້ນຄວ້າ, ທົດລອງ, ສາທິດ ຮູບແບບການຈັດການດິນ, ນ້ຳ ແລະ ອັດຕາຝຸ່ນເໝາະສົມຕໍ່ການປູກພືດ ໃນແຕ່ລະເຂດທີ່ສາມາດນຳໃຊ້ໃຫ້ຖືກກັບພືດປູກ ແລະ ສະພາບຂອງດິນ;
2. ຄົ້ນຄວ້າຮູບແບບການຜະລິດຝຸ່ນ; ເກັບຂໍ້ມູນ ແລະ ຕົວຢ່າງວັດຖຸດິບ ທີ່ມີທ່າແຮງ ແຕ່ລະທ້ອງຖິ່ນ ທີ່ໂຮງງານ, ຜູ້ປະກອບການ, ແລະ ກຸ່ມຊາວກະສິກອນ ນຳໃຊ້ຜະລິດຝຸ່ນ;
3. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາໂຮງງານຜະລິດຝຸ່ນຊີວະພາບ, ຝຸ່ນອິງຄະທາດ ແລະ ໂຮງງານຝຸ່ນວິທະຍາສາດ; ສ້າງແຜນການດຸນດ່ຽງຝຸ່ນ ໃນຂອບເຂດທົ່ວປະເທດ;
4. ຕິດຕາມ, ກວດກາ ຊຸກຍູ້, ໃຫ້ການບໍລິການ, ການຜະລິດຝຸ່ນ, ດິນປູກ ຂອງໂຮງງານ ແລະ ຜູ້ປະກອບການ ແລະ ກຸ່ມຊາວກະສິກອນ; ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອດຸນດ່ຽງການສະໜອງຝຸ່ນພາຍໃນ, ໃນການອອກ, ໂຈະ ຫຼື ຖອນໃບອະນຸຍາດ ດຳເນີນທຸລະກິດ ກ່ຽວກັບໂຮງງານຜະລິດ ແລະ ຮ້ານຈຳໜ່າຍຝຸ່ນ;
5. ສ້າງຄວາມເຂັ້ມແຂງ ດ້ານການພັດທະນາຮູບແບບການນຳໃຊ້ດິນ, ການຜະລິດ ແລະ ນຳໃຊ້ຝຸ່ນ ໃຫ້ຂະແໜງການ, ສູນ, ໜ່ວຍງານ, ສະຖານີ ຕາມສາຍຕັ້ງ ແລະ ວິຊາການດິນຂັ້ນບ້ານ (ອາສາສະໝັກໝໍດິນ);
6. ເຜີຍແຜ່ຜົນການຄົ້ນຄວ້າ, ການທົດລອງ ແລະ ບັນດາເຕັກນິກ ທີ່ເໝາະສົມການນຳໃຊ້ດິນ, ການຜະລິດ-ນຳໃຊ້ຝຸ່ນ ໃຫ້ກຸ່ມຊາວກະສິກອນ, ຜູ້ປະກອບການ, ນັກຮຽນຮູ້ ແລະ ຜູ້ສົນໃຈທົ່ວໄປ;
7. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

**ມາດຕາ 11 ໜ້າທີ່ ຂອງສູນວິໄຈດິນ, ພືດ ແລະ ຝຸ່ນ**

ສູນວິໄຈດິນ, ພືດ ແລະ ຝຸ່ນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ວິໄຈ ຄຸນສົມບັດທາງດ້ານ ເຄມີ, ຟີຊິກ ແລະ ຊີວະວິທະຍາ ຂອງດິນ, ວິໄຈຝຸ່ນ, ນ້ຳ ແລະ ພືດ, ສານພິດຕົກຄ້າງ ແລະ ທາດໂລຫະໜັກທີ່ເປັນພິດ ທີ່ໄດ້ຮັບຜົນກະທົບຈາກການນຳໃຊ້ເຄມີ, ຢາຂ້າຫຍ້າ, ຢາຂ້າແມງໄມ້, ຢາຂ້າເຊື້ອລາ, ຈາກການຂຸດຄົ້ນແຮ່ທາດ ແລະ ອື່ນໆ;
2. ບໍລິການເກັບຕົວຢ່າງ ແລະ ວິໄຈ ດິນ, ນ້ຳ, ພືດ ແລະ ຝຸ່ນ ໃຫ້ພາກລັດ, ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ, ສະຖາບັນການສຶກສາ, ຊາວກະສິກອນ ລວມທັງໃຫ້ຄຳແນະນຳການນຳໃຊ້ຂໍ້ມູນການວິໄຈ;
3. ເປັນສູນກາງໃຫ້ແກ່ ເຄືອຂ່າຍຫ້ອງວິໄຈໃນ ສປປ ລາວ ພ້ອມທັງເປັນໃຈກາງນຳພາສ້າງ, ປັບປຸງ ຫ້ອງວິໄຈລະດັບພາກໃນຂອບເຂດທົ່ວປະເທດ. ຄວບຄຸມຄຸນນະພາບການວິໄຈ ດິນ, ນ້ຳ, ພືດ ແລະ ຝຸ່ນ ສຳລັບກະສິກຳ ໃຫ້ໄດ້ມາດຕະຖານສາກົນ;
4. ຝຶກອົບຮົມການວິໄຈດິນ, ນ້ຳ, ພືດ ແລະ ຝຸ່ນໃຫ້ວິຊາການຫ້ອງວິໄຈລະດັບພາກ, ວິທະຍາໄລ, ມະຫາວິທະຍາໄລ, ຫ້ອງວິໄຈເອກະຊົນ ແລະ ພາກສ່ວນອື່ນໆ ທີ່ມີຄວາມສົນໃຈ ໃນຂອບເຂດທົ່ວປະເທດ;
5. ຕິດຕາມກວດກາ ແລະ ປະເມີນຄຸນນະພາບ ຂອງຫ້ອງວິໄຈ ລະດັບພາກ, ວິທະຍາໄລ, ມະຫາວິທະຍາໄລ, ຫ້ອງວິໄຈເອກະຊົນ;
6. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍຂອງຂັ້ນເທິງ.

# ໝວດທີ 5
# ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12 ຫຼັກການ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງກົມ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ; ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ປ່າໄມ້ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 13 ແບບແຜນວິທີເຮັດວຽກ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນ ກັບພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍຂອງວຽກງານ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການແຕ່ລະໄລຍະ;
4. ຫົວໜ້າກົມ ມີຄວາມຮັບຜິດຊອບໂດຍກົງຕໍ່ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກົມມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກົມ;
5. ຫົວໜ້າກົມ ເປັນຜູ້ລົງລາຍເຊັນຕໍ່ບັນດາເອກະສານສຳຄັນ, ໃນເວລາຫົວໜ້າກົມຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດທ່ານໜຶ່ງ ຮັກສາການແທນ ແລະ ຜູ້ຮັກສາການແທນຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງໃຫ້ຫົວໜ້າກົມຊາບ ພາຍຫຼັງກັບມາປະຈຳການ;
6. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ;
7. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

# ໝວດທີ 6
# ບົດບັນຍັດສຸດທ້າຍ

**ມາດຕາ 14 ງົບປະມານ ແລະຕາປະທັບ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ຫ້ອງການ, ບັນດາກົມ, ສະຖາບັນ ແລະ ທົ່ວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສະບັບເລກທີ 3826/ກປ, ລົງວັນທີ 18 ສິງຫາ 2017.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ